ທາງການໄທ ຈັດສົ່ງຊາວມົ້ງ 67 ຄົນແກ່ ລາວ

ໃນວັນທີ 10 ເມສາ 2008, ທີ່ໂຮງແຮມລາດຊະວົງ ນະຄອນຫລວງວຽງຈັນ, ທາງການໄທ ໄດ້ຈັດສົ່ງຊາວມົ້ງລາວ ທີ່ເຂົ້າເມືອງຜິດກົດໝາຍ ຈຳນວນ 67 ຄົນ, ມີ 19 ຄອບຄົວ ຢູ່ບ້ານຫ້ວຍນ້ຳຂາວ, ອຳເພີເຂົາຄໍ້, ຈັງຫວັດເພັດຊະບູນ, ປະເທດໄທ ທີ່ສະຫມັກໃຈກັບຄືນປະເທດ ໃຫ້ແກ່ທາງການລາວ.

ໃນພິທີ ໄດ້ມີການເຊັນບົດບັນທຶກມອບ-ຮັບ ລະຫວ່າງ ທ່ານ ຍົງ ຈັນທະລັງສີ, ຫົວໜ້າກົມການຂ່າວ, ກະຊວງການຕ່າງປະເທດລາວ, ກຳມະການຄະນະອະນຸກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍ ຕາມຊາຍແດນທົ່ວໄປ ລາວ-ໄທ ແລະ ທ່ານ ພັນເອກ ໄພໂຣດ ວິໄລລັກ, ຜູ້ອຳນວຍການກອງກິດຈະການຊາຍແດນ ໄທ-ລາວ, ກົມກິດຈະການຊາຍແດນທະຫານ, ເລຂານຸການຄະນະອະນຸກຳມະການຮ່ວມມືຮັກສາຄວາມສະຫງົບຕາມຊາຍແດນທົ່ວໄປ ໄທ-ລາວ ໂດຍມີທ່ານ ພົນຈັດຕະວາ ຄຳມ່ວນ ສະໄຫວວັນ, ກຳມະການຄະນະອະນຸກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ແລະ ທ່ານ ພົນໂທ ນິພັດ ທອງເລັກ, ເຈົ້າກົມກິດຈະການຊາຍແດນທະຫານກອງບັນຊາການທະຫານສູງສຸດຂອງໄທ ພ້ອມດ້ວຍເຈົ້າໜ້າທີ່ງກ່ຽວຂ້ອງທັງສອງຝ່າຍເຂົ້າຮ່ວມ.

ຊາວມົ້ງລາວ ທີ່ເຂົ້າເມືອງຜິດກົດໝາຍເຫລົ່ານີ້ ໄດ້ຖືກຕ້ອນຮັບຈາກທາງການລາວ ແລະ ນຳໄປທີ່ສູນຮັບຕ້ອນຢູ່ແຂວງບໍລິຄຳໄຊ ເພື່ອສຶກສາອົບຮົມ ໃຫ້ເຂົາເຈົ້າເປັນພົນລະເມືອງດີຂອງຊາດ, ບໍ່ໃຫ້ຫລົງເຊື່ອ ແລະ ຕົກເປັນເຫຍື່ອຂອງຂະບວນການຄ້າມະນຸດ ກ່ອນທີ່ຈະມອບສົ່ງໃຫ້ອຳນາດການປົກຄອງທ້ອງຖິ່ນເດີມ ແລະ ຍາດຕິພີ່ນ້ອງ ຮັບເອົາໄປເບິ່ງແຍງດູແລຕໍ່ໄປ. ສ່ວນຜູ້ທີ່ເຄີຍເຮັດອາຊີບເລື່ອນລອຍ, ບໍ່ມີທີ່ຢູ່ອາໄສແບບຖາວອນ ແລະ ບໍ່ມີເນື້ອທີ່ທຳການຜະລິດ, ທາງການລາວ ຈະຫາບ່ອນທີ່ພັກອາໄສ ແລະ ທີ່ດິນປູກຝັງໃຫ້ໃໝ່ ພ້ອມທັງ ຈະໃຫ້ການຊ່ວຍເຫລືອເບື້ອງຕົ້ນທີ່ຈຳເປັນ ຈົນກວ່າເຂົາເຈົ້າຈະສາມາດເພິ່ງຕົນເອງໄດ້. ລັດຖະບານລາວ ຈະໄດ້ບັນຈຸເຂົ້າເປັນສະມາຊິກໃໝ່ ຂອງບ້ານຜາຫລັກ, ເມືອງກາສີ, ແຂວງວຽງຈັນ, ເຊິ່ງເປັນບ້ານໃໝ່ ທີ່ ທາງການລາວໄດ້ສ້າງໄວ້ ເມື່ອຕົ້ນປີ 2006 ເພື່ອຮອງຮັບປະຊາຊົນລາວບັນດາເຜົ່າ ທີ່ປະສົບເຄາະຮ້າຍໃນກໍລະນີດັ່ງກ່າວ.

ທ່ານ ຍົງ ຈັນທະລັງສີ ໄດ້ກ່າວຊົມເຊີຍຕໍ່ທາງການໄທ ໃນການສົ່ງ-ມອບຊາວລາວ ທີ່ເຂົ້າເມືອງຜິດກົດໝາຍຄັ້ງນີ້ ເຊິ່ງເປັນຄັ້ງທີ 4 ໃນຮອບ 1 ປີ ຜ່ານມາ ແລະ ເປັນການປະຕິບັດຕາມຂໍ້ຕົກລົງຂອງສອງຄະນະອະນຸກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນລາວ-ໄທ, ໄທ-ລາວ ທີ່ໄດ້ລົງນາມຢູ່ທີ່ເມືອງວັງວຽງ, ແຂວງວຽງຈັນ ເມື່ອເດືອນ ກັນຍາ ປີ 2007 ຜ່ານມາ, ພ້ອມດຽວກັນນັ້ນ ທ່ານ ຍັງໄດ້ຢືນຢັນຕື່ມວ່າ ທາງການລາວ ກຽມພ້ອມທຸກເງື່ອນໄຂ ທີ່ຈະປະຕິບັດຕາມສັນຍາ, ທັງຮັບປະກັນວ່າ ຊາວລາວທີ່ຖືກສົ່ງກັບຄືນມານີ້ ຈະໄດ້ຮັບການຊ່ວຍເຫລືອ ແລະ ອຳນວຍຄວາມສະດວກຈາກລັດຖະບານລາວ ເພື່ອເຮັດໃຫ້ ເຂົາເຈົ້າ ມີຊີວິດການເປັນຢູ່ດີຂຶ້ນ ແລະ ເຊື່ອໝັ້ນວ່າ ທາງການໄທ ຈະສືບຕໍ່ຈັດສົ່ງຊາວລາວ ທີ່ຍັງເຫລືອຢູ່ບ້ານຫວ້ຍນ້ຳຂາວ ໃຫ້ໝົດພາຍໃນປີ 2008 ຕາມທີ່ສອງຝ່າຍໄດ້ຕົກລົງກັນໄວ້.